**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພັກປະຊາຊົນປະຕິວັດລາວ

ຄະນະປະຈຳພັກແຂວງ

ເລກທີ 125 /ຄປພ ວຈ

ລົງວັນທີ 06 ກໍລະກົດ 2026

# ມະຕິຕົກລົງ

## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະໂຄສະນາອົບຮົມແຂວງວຽງຈັນ

- **ອີງຕາມ** ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 05/ສພຊ, ລົງວັນທີ 20 ມີນາ 2025 ວ່າດ້ວຍການຮັບຮອງການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ.
- **ອີງຕາມ** ແຈ້ງການຂອງຄະນະໂຄສະນາອົບຮົມສູນກາງພັກ ( ເພີ່ມເຕີມ ) ສະບັບເລກທີ 36/ຄອສພ, ລົງວັນທີ 17ກໍລະກົດ 2025 ກ່ຽວກັບການປັບປຸງກົງຈັກພາຍໃນ ຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງໃນຂອບເຂດທົ່ວປະເທດ.
- **ອີງຕາມ** ມະຕິຕົກລົງຂອງກົມການເມືອງສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 22/ກມສພ, ລົງວັນທີ 23 ກຸມພາ 2026.
- **ອີງຕາມ** ໜັງສືສະເໜີ ຂອງຄະນະຈັດຕັ້ງແຂວງວຽງຈັນ ສະບັບເລກທີ 872/ ຄຈຂ.ວຈ, ລົງວັນທີ 01 ກໍລະກົດ 2026.

## ຄະນະປະຈຳພັກແຂວງ ຕົກລົງ:

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 01 : ຈຸດປະສົງ.**

ມະຕິຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະໂຄສະນາອົບຮົມແຂວງ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຄຸ້ມຄອງ, ກວດກາ, ຊຸກຍູ້, ສົ່ງເສີມ ແລະ ການພັດທະນາວຽກງານໂຄສະນາອົບຮົມ ແລະ ວຽກງານຖະ ແຫຼງຂ່າວສື່ມວນຊົນ ໃນຂອບເຂດທົ່ວແຂວງ.

**ມາດຕາ 02 : ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະໂຄສະນາອົບຮົມແຂວງ ຂຽນເປັນຕົວອັກສອນຫຍໍ້ວ່າ "ຄອຂ.ວຈ" ແມ່ນອົງການເສນາທິການຂອງຄະນະບໍລິຫານງານພັກແຂວງ ແລະ ຄະນະໂຄສະນາອົບຮົມສູນກາງພັກ, ມີຖານະທຽບເທົ່າຄະນະພັກພະແນກການອົງການ, ກົມກອງ ແລະ ອົງການຈັດຕັ້ງລັດຂັ້ນແຂວງ, ມີພາລະບົດບາດເປັນເສນາທິການໃຫ້ຄະນະບໍລິຫານງານພັກແຂວງ ໂດຍສະເພາະແມ່ນຄະນະປະຈຳພັກແຂວງ, ຄະນະໂຄສະນາອົບຮົມສູນກາງພັກ ແລະ ຄະນະກຳມະການປົກຄອງແຂວງ ໃນການເຮັດວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນຂອງພັກ ແລະ ລັດ (ຄະນະກຳມະການປົກຄອງແຂວງ)

ສະແກນດ້ວຍ CamScanner

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 03 : ໜ້າທີ່.

1. ຄົ້ນຄວ້າເຊື່ອມຊຶມ ແລະ ພັນຂະຫຍາຍແນວທາງ - ນະໂຍບາຍຂອງພັກ-ລັດ ກ່ຽວກັບວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນໃນແຕ່ລະໄລຍະ ແລະ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ພາຍໃນແຂວງ.
2. ຄົ້ນຄວ້າທຳແໜ້ນມະຕິຂອງກອງປະຊຸມໃຫຍ່ຂອງພັກ, ມະຕິກອງປະຊຸມໃຫຍ່ອົງຄະນະພັກແຂວງ ເພື່ອສ້າງເປັນເອກະສານສຶກສາອົບຮົມ, ເອກະສານເຜີຍແຜ່ເຊື່ອມຊຶມໃຫ້ສະມາຊິກພັກ, ພະນັກງານ, ຊັ້ນຄົນຕ່າງໆ ແລະ ປະຊາຊົນບັນດາເຜົ່າໃນທົ່ວແຂວງ.
3. ຕິດຕາມກຳແໜ້ນສະພາບແນວຄິດ-ທາງສຽງສັງຄົມ ລວມທັງສະພາບການທີ່ພົ້ນເດັ່ນ ຢູ່ພາຍໃນແຂວງ ທີ່ມີຜົນກະທົບຕໍ່ແນວຄິດ - ຈິດຕະສາດຂອງຄົນ ໃນສັງຄົມ; ພ້ອມທັງເປັນເຈົ້າການຄົ້ນຄວ້າ, ສະເໜີທິດທາງ ແລະ ມາດຕະການແກ້ໄຂຕໍ່ຄະນະປະຈຳພັກແຂວງ ຢ່າງທັນການ.
4. ສ້າງ ແລະ ພັນຂະຫຍາຍເອກະສານປາຖະກະຖາ, ໂຄສະນາ, ອະທິບາຍກ່ຽວກັບແນວທາງນະໂຍບາຍ ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ຕໍ່ແຕ່ລະເປົ້າໝາຍໃຫ້ແທດເໝາະ ແລະ ທັນການ.
5. ສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງ ເພື່ອສ້າງ ແລະ ປັບປຸງຫຼັກສູດການຮຽນ - ການສອນທິດສະດີ, ແນວທາງຂອງພັກ ແລະ ວິຊາສັງຄົມ - ການເມືອງ ໃນສະຖາບັນການສຶກສາ ຊັ້ນຕ່າງໆ ພາຍໃນແຂວງ.
6. ສົມທົບກັບຄະນະໂຄສະນາອົບຮົມສູນກາງພັກ, ຄະນະໂຄສະນາອົບຮົມເມືອງ ແລະ ຄະນະພັກແຕ່ລະຂັ້ນເພື່ອເຄື່ອນໄຫວເຮັດວຽກງານການເມືອງແນວຄິດ, ວຽກງານໂຄສະນາອົບຮົມ ແລະ ວຽກງານຖະແຫຼງຂ່າວສື່ມວນຊົນໃນຂອບເຂດທົ່ວແຂວງ.
7. ດຳເນີນວຽກງານຖະແຫຼງຂ່າວສື່ມວນຊົນ ທີ່ເປັນກະບອກສຽງຂອງຄະນະບໍລິຫານງານພັກແຂວງ ແລະ ຄະນະກຳມະການປົກຄອງແຂວງໃນການເຜີຍແຜ່ແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ; ນຳສະເໜີຂ່າວເຫດການຕ່າງໆທີ່ເກີດຂຶ້ນຢູ່ພາຍໃນແຂວງຢ່າງມີການເລືອກເຟັ້ນ; ຕອບໂຕ້, ອະທິບາຍບັນຫາຕ່າງໆ ເຊິ່ງພົວພັນເຖິງທັດສະນະແນວຄິດ, ຄວາມຮັບຮູ້ທີ່ຜິດເຂວຂອງສັງຄົມ ຕໍ່ແນວທາງ, ນະໂຍບາຍຂອງພັກ, ກົດໝາຍຂອງລັດ.
8. ຄຸ້ມຄອງການເຄື່ອນໄຫວຂອງສື່ມວນຊົນ ໃນທົ່ວແຂວງ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້.
9. ຕິດຕາມ, ກວດກາ ແລະ ປະເມີນຜົນ ການໂຄສະນາ, ຖະແຫຼງຂ່າວຂອງສື່ມວນຊົນ ໃນແຕ່ລະໄລຍະ.
10. ຈັດຕັ້ງຝຶກອົບຮົມຄວາມຮູ້ດ້ານທິດສະດີ, ແນວທາງ, ວຽກງານວິຊາສະເພາະທາງດ້ານວຽກງານໂຄສະນາ, ວຽກງານອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນ ໃຫ້ແກ່ຜູ້ທີ່ເຮັດວຽກງານໂຄສະນາອົບຮົມ ໃນຂອບເຂດທົ່ວແຂວງ.



ສະແກນດ້ວຍ CamScanner

11. ປຸກລະດົມກຳລັງແຮງໃນທົ່ວສັງຄົມປະກອບສ່ວນເຂົ້າໃນວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນ; ສ້າງຕາໜ່າງເຝື່ອນຮ່ວມງານ ດ້ານວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນຢ່າງເປັນລະບົບ, ເຄື່ອນໄຫວເປັນປົກກະຕິ ແລະ ມີປະສິທິຜົນ.
12. ຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງ, ການຄຸ້ມຄອງ, ການສ້າງແຜນກຳນົດພະນັກງານ, ແຜນບຳລຸງ - ກໍ່ສ້າງພະນັກງານ, ກຳນົດຕຳແໜ່ງງານ, ການຈັດວາງສັບຊ້ອນພະນັກງານ; ການປະຕິບັດນະໂຍບາຍ, ການຍ້ອງຍໍຜົນງານ, ການປະເມີນຜົນ ແລະ ການປະຕິບັດວິໄນຕໍ່ພະນັກງານ ຕາມລະບຽບການທີ່ກຳນົດໄວ້.
13. ຂຶ້ນແຜນການ, ແຜນງົບປະມານ, ສ້າງລາຍຮັບວິຊາການ ( ພາກສ່ວນທີ່ມີເງື່ອນໄຂ ) ພ້ອມທັງຄຸ້ມຄອງ-ນຳໃຊ້ງົບປະມານ, ຊັບສິນຂອງລັດ ເຂົ້າໃນການເຄື່ອນໄຫວວຽກງານໃຫ້ສອດຄ່ອງກັບກົດໝາຍ, ລະບຽບການຂອງລັດ ທີ່ກຳນົດໄວ້.
14. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ແລະ ຕາມທິດຊີ້ນຳຂອງຄະນະປະຈຳພັກແຂວງ.

ມາດຕາ 4 : ຂອບເຂດສິດ.

1. ສະເໜີຕໍ່ຄະນະປະຈຳພັກແຂວງ ໂດຍປະສານສົມທົບກັບຄະນະຈັດຕັ້ງແຂວງ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ການບັນຈຸ, ສັບຊ້ອນ ແລະ ການຈັດວາງບຸກຄະລາກອນ, ການກຳນົດຕຳແໜ່ງ ຂອງຄະນະໂຄສະນາອົບຮົມແຂວງ ຕາມການແບ່ງຂັ້ນຄຸ້ມຄອງ.
2. ນຳພາ - ຊີ້ນຳການເຮັດວຽກງານການເມືອງ - ແນວຄິດ, ວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນຕາມຄວາມຮັບຜິດຊອບຂອງຕົນ.
3. ອອກຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຕ່າງໆ ກ່ຽວກັບວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ, ວຽກງານຖະແຫຼງຂ່າວສື່ມວນຊົນ ໃຫ້ພະແນກການ, ອົງການ, ກົມກອງ ແລະ ເມືອງ ຈັດຕັ້ງປະຕິບັດ.
4. ກ່າວເຕືອນ, ປັບໃໝ, ສັ່ງໂຈະ ແລະ ຍຸບເລີກ ການດຳເນີນກິດຈະການດ້ານຖະແຫຼງຂ່າວສື່ມວນຊົນ ຕາມການແບ່ງຂັ້ນຄຸ້ມຄອງ ເມື່ອມີການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.
5. ຮຽກໂຮມພະນັກງານນຳພາ - ຄຸ້ມຄອງ ແລະ ວິຊາການຄະນະໂຄສະນາອົບຮົມແຂວງ ເຂົ້າຮ່ວມປະຊຸມ ຫຼື ຜູ້ຮັບຜິດຊອບວຽກງານການເມືອງ-ແນວຄິດ ຂອງພະແນກການ, ອົງການ, ກົມກອງ ແລະ ເມືອງ ເພື່ອປະຊຸມປຶກສາຫາລື, ຄົ້ນຄວ້າແກ້ໄຂບັນຫາ ຫຼື ເຜີຍແຜ່ແນະນຳກ່ຽວກັບທິດທາງ, ວິທີການ ແລະ ມາດຕະການດຳເນີນວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ ແລະ ວຽກງານຖະແຫຼງຂ່າວສື່ມວນຊົນ.
6. ສະເໜີເລື່ອນຊັ້ນ, ຍ້ອງຍໍຜົນງານ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ລົງວິໄນຕໍ່ພະນັກງານ, ລັດຖະກອນໃນຂັ້ນຄຸ້ມຄອງຂອງຕົນຕາມລະບຽບກົດໝາຍ.
7. ຄຸ້ມຄອງ, ກວດກາການນຳໃຊ້ງົບປະມານ ແລະ ການສ້າງລາຍຮັບດ້ານວິຊາການ ເຂົ້າໃນງົບປະມານ ຂອງວຽກງານຖະແຫຼງຂ່າວສື່ມວນຊົນ, ການນຳໃຊ້ຊັບສິນຂອງລັດ ທີ່ຂຶ້ນກັບການຄຸ້ມຄອງ ຂອງຄະນະໂຄສະນາອົບຮົມແຂວງ ຕາມກົດໝາຍ, ລະບຽບການກຳນົດໄວ້.
8. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງ ຄະນະປະຈຳພັກແຂວງ.



ສະແກນດ້ວຍ CamScanner

## ໝວດທີ III
## ກົງຈັກການຈັດຕັ້ງ ແລະ ບຸກຄະລາການ

ມາດຕາ 05 : ໂຄງປະກອບການຈັດຕັ້ງປະກອບມີ 5 ຂະແໜງ ຄື:

1. ຂະແໜງບໍລິຫານ.
2. ຂະແໜງໂຄສະນາ.
3. ຂະແໜງອົບຮົມ.
4. ຂະແໜງສັງລວມ ແລະ ຂໍ້ມູນຂ່າວສານ.
5. ຂະແໜງສື່ມວນຊົນ.

ມາດຕາ 06 : ໂຄງປະກອບບຸກຄະລາກອນ.

1. ຫົວໜ້າຄະນະໂຄສະນາອົບຮົມແຂວງ ມີ 01 ສະຫາຍ, ຊຶ່ງໄດ້ຮັບການແຕ່ງຕັ້ງຈາກຄະນະປະຈຳພັກແຂວງ, ມີຄວາມຮັບຜິດຊອບໂດຍກົງຕໍ່ຄະນະບໍລິຫານງານພັກແຂວງ ແລະ ຄະນະໂຄສະນາອົບຮົມສູນກາງພັກ ກ່ຽວກັບຜົນສຳເລັດ ຫຼື ຂໍ້ຂາດຕົກບົກຜ່ອງຂອງຄະນະໂຄສະນາອົບຮົມແຂວງ.
2. ມີຮອງຫົວໜ້າຄະນະໂຄສະນາອົບຮົມແຂວງ 2-3 ທ່ານ ຊຶ່ງໄດ້ຮັບການແຕ່ງຕັ້ງ ຈາກຄະນະປະຈຳພັກແຂວງ ຕາມການສະເໜີຂອງຄະນະຈັດຕັ້ງແຂວງ, ເປັນຜູ້ຊ່ວຍ ຫົວໜ້າໃນການນຳພາ-ຊີ້ນຳວຽກລວມ, ລົງເລິກວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າ, ມີຄວາມຮັບຜິດຊອບໂດຍກົງຕໍ່ໝູ່ຄະນະ ແລະ ຫົວໜ້າຄະນະໂຄສະນາອົບຮົມແຂວງກ່ຽວກັບຜົນສຳເລັດ, ຂໍ້ຂາດຕົກບົກຜ່ອງໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ.
3. ມີຫົວໜ້າຂະແໜງ 05 ສະຫາຍ, ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງໜ້າທີ່ວຽກງານ.

## ໝວດທີ IV
## ໜ້າທີ່ຂອງແຕ່ລະຂະແໜງ

ມາດຕາ 07 : ໜ້າທີ່ຂອງຂະແໜງບໍລິຫານ.

1. ຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດ, ຈັດຕັ້ງປະຕິບັດ ມະຕິ, ຄຳສັ່ງ, ແຈ້ງການ, ບົດແນະນຳຂອງຂັ້ນເທິງກ່ຽວກັບວຽກຫ້ອງການບໍລິຫານ.
2. ເປັນເສນາທິການໃນການຄົ້ນຄວ້າສ້າງນິຕິກຳຕ່າງໆ (ມະຕິຕົກລົງ, ຄຳສັ່ງແນະນຳ, ແຈ້ງການ) ກ່ຽວກັບວຽກງານການເມືອງແນວຄິດ ແລະ ວຽກງານວິຊາສະເພາະ ຕາມຂອບເຂດຄວາມຮັບຜິດຊອບ.
3. ສະຫຼຸບການຈັດຕັ້ງປະຕິບັດວຽກງານຮອບດ້ານ ແລະ ສ້າງແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ຂອງຄະນະໂຄສະນາອົບຮົມແຂວງ.
4. ສະເໜີການບັນຈຸ, ແຕ່ງຕັ້ງ, ຊັບຊ້ອນ, ຍົກຍ້າຍ, ຍ້ອງຍໍ, ນະໂຍບາຍ, ການເລື່ອນຊັ້ນ-ຂັ້ນ ແລະ ການລົງວິໄນຕໍ່ພະນັກງານ-ລັດຖະກອນ.
5. ເກັບກຳສະຖິຕິ, ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ແຜນບຳລຸງ-ກໍ່ສ້າງພະນັກງານ, ການກຳນົດຕຳແໜ່ງງານ ແລະ ປະເມີນຜົນການປະຕິບັດວຽກງານ.
6. ຕິດຕາມ, ສ້າງແຜນການເຄື່ອນໄຫວ, ສະໜອງວັດຖຸອຸປະກອນ, ເຄື່ອງຮັບໃຊ້ຫ້ອງການ ແລະ ງົບປະມານ ເພື່ອອຳນວຍຄວາມສະດວກໃຫ້ແກ່ການນຳ ແລະ ພະນັກງານ.



ສະແກນດ້ວຍ CamScanner

7. ຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານຮ່ວງຕ່າງໆ ໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ວ່າດ້ວຍ ງົບປະມານແຫ່ງລັດ.
8. ເປັນໃຈກາງປະສານສົມທົບກັບພະແນກການເງິນ ໃນການຂຽນບົດສະເໜີໂຄງການລົງທຶນຂອງລັດ.
9. ຄຸ້ມຄອງຊັບສິນຂອງລັດ, ວຽກງານຂາເຂົ້າ-ຂາອອກ, ສຳເນົາເອກະສານ, ຈັດພິມເອກະສານ, ການປ້ອງກັນເວນຍາມ ແລະ ຮັກສາຄວາມເປັນລະບຽບຮຽບຮ້ອຍ.
10. ປະສານສົມທົບກັບບັນດາພະແນກການ, ອົງການ, ເມືອງ ເພື່ອເຄື່ອນໄຫວວຽກງານວິຊາສະເພາະ.
11. ຕິດຕາມ, ກວດກາ, ສະຫຼຸບລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

ມາດຕາ 8 : ໜ້າທີ່ຂອງຂະແໜງໂຄສະນາ.

1. ຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດ, ຈັດຕັ້ງປະຕິບັດມະຕິ, ຄຳສັ່ງຂອງພັກ-ຂອງແຂວງເພື່ອຫັນເປັນແຜນການ-ໂຄງການໂຄສະນາແຕ່ລະໄລຍະ ແລະ ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດວຽກງານຕົວຈິງ.
2. ຄົ້ນຄວ້າ, ປັບປຸງເນື້ອໃນເອກະສານໂຄສະນາ-ປາຖະກະຖາ ໃຫ້ແທດເໝາະກັບກຸ່ມເປົ້າໝາຍ ແລະ ຈຸດພິເສດຂອງແຕ່ລະທ້ອງຖິ່ນ.
3. ຈັດຕັ້ງການໂຄສະນາເຄື່ອນທີ່ໃຫ້ປະຊາຊົນບັນດາເຜົ່າ , ຊຸກຍູ້ ແລະ ຕິດຕາມການເຄື່ອນໄຫວວຽກງານໂຄສະນາປາຖະກະຖາຜ່ານສື່ຕ່າງໆ.
4. ເກັບກຳຂໍ້ມູນຄອບຄົວຕົວແບບໃນການຜະລິດເປັນສິນຄ້າ ເພື່ອສ້າງເປັນສາລະຄະດີພາຍໃນທ້ອງຖິ່ນ.
5. ຮັບຜິດຊອບວຽກງານວາລະສານອະລຸນໃໝ່, ວາລະສານໂຄສະນາ ແລະ ຄັດຈ້ອນເນື້ອໃນນິຕິກຳຕ່າງໆ ເພື່ອສ້າງເປັນບົດຂ່າວ, ບົດຄວາມ, ສາລະໜ້າຮູ້.
6. ສ້າງແຜນການ, ໂຄງການ ຈັດຝຶກອົບຮົມຍົກລະດັບໃຫ້ພະນັກງານຜູ້ເຮັດວຽກງານໂຄສະນາ-ປາຖະກະຖາ ຢູ່ບັນດາພະແນກການ ແລະ ເມືອງ.
7. ຕິດຕາມ, ກວດກາ, ສະຫຼຸບລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະ ປະຕິບັດໜ້າທີ່ ອື່ນໆ ຕາມການມອບໝາຍ.

ມາດຕາ 09 : ໜ້າທີ່ຂອງຂະແໜງອົບຮົມ.

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ກຳແໜ້ນແນວທາງແຜນນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ເພື່ອຫັນເປັນແຜນການ-ໂຄງການໂຄສະນາແຕ່ລະໄລຍະ ແລະ ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດວຽກງານຕົວຈິງ.
2. ເປັນເສນາທິການໃນການຕິດຕາມ, ສະຫຼຸບສັງລວມການຈັດຕັ້ງປະຕິບັດແນວທາງນະໂຍບາຍ, ມະຕິ, ຄຳສັ່ງ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ເພື່ອລາຍງານໃຫ້ຂັ້ນເທິງ.
3. ຄົ້ນຄວ້າກຳແໜ້ນ ມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງ ເພື່ອຜັນຂະຫຍາຍ ແລະ ສ້າງເປັນເອກະສານອົບຮົມໃຫ້ເປົ້າໝາຍຕ່າງໆ.
4. ຈັດຝຶກອົບຮົມ, ບຳລຸງ, ຍົກລະດັບຄວາມຮູ້ທາງດ້ານທິດສະດີການເມືອງ-ການປົກຄອງ ໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນ.

5. ປະສານສົມທົບກັບຄະນະຈັດຕັ້ງແຂວງ ແລະ ພາກສ່ວນຕ່າງໆ ເພື່ອເປີດຮຽນສະໜັບສະໜູນມະຫາຊົນກ່ອນເຂົ້າພັກ ແລະ ຝຶກອົບຮົມສະມາຊິກພັກໃໝ່.
6. ສົມທົບກັບພະແນກສຶກສາທິການ ແລະ ກິລາ ເພື່ອຕິດຕາມ, ກວດກາ ແລະ ຊຸກຍູ້ການຮຽນ-ການສອນວິຊາສຶກສາພົນລະເມືອງ, ວິຊາສັງຄົມການເມືອງ ຢູ່ບັນດາໂຮງຮຽນ.
7. ສ້າງແຜນການເຄື່ອນໄຫວ, ສະຫຼຸບຕີລາຄາ ແລະ ປະເມີນຜົນການຝຶກອົບຮົມ ໃນແຕ່ລະຄັ້ງ.
8. ຕິດຕາມ, ກວດກາ, ສະຫຼຸບລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 10: ໜ້າທີ່ຂອງຂະແໜງສັງລວມ ແລະ ຂໍ້ມູນຂ່າວສານ.**

1. ຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກ-ລັດ ກ່ຽວກັບວຽກງານສັງລວມ ແລະ ຂໍ້ມູນຂ່າວສານ.
2. ສະຫຼຸບສັງລວມວຽກງານການເມືອງແນວຄິດ, ວຽກງານທາງສຽງສັງຄົມ ແລະ ວຽກງານກໍ່ສ້າງຮາກຖານການເມືອງທົ່ວແຂວງເປັນແຕ່ລະໄລຍະ.
3. ຕິດຕາມ, ເກັບກຳສະພາບແນວຄິດ-ທາງສຽງສັງຄົມ (ດ້ານຕັ້ງໜ້າ-ດ້ານຫຍໍ້ທໍ້), ວິເຄາະ, ວິໄຈ ແລະ ນຳສະເໜີວິທີການ, ມາດຕະການແກ້ໄຂ.
4. ຕິດຕາມ, ກວດກາ, ຄຸ້ມຄອງ, ພັດທະນາລະບົບເວບໄຊສ໌, ສື່ເອເລັກໂຕຼນິກ, ສື່ອອນລາຍ, ລະບົບທີ່ທັນສະໄໝ ເພື່ອຮັບໃຊ້ວຽກງານວິຊາສະເພາະ.
5. ສ້າງແຜນການ, ແຜນງານ, ໂຄງການ ເພື່ອຈັດຝຶກອົບຮົມຍົກລະດັບໃຫ້ພະນັກງານທີ່ເຮັດວຽກສັງລວມ, ວຽກເກັບກຳທາງສຽງສັງຄົມ ແລະ ວຽກເຕັກໂນໂລຊີ-ຂໍ້ມູນຂ່າວສານ.
6. ຕິດຕາມ, ກວດກາ, ສະຫຼຸບລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 11: ໜ້າທີ່ຂອງຂະແໜງສື່ມວນຊົນ.**

1. ຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍແນວທາງ, ແຜນນະໂຍບາຍ ແລະ ສ້າງແຜນຍຸດທະສາດການພັດທະນາວຽກງານຂ່າວສື່ມວນຊົນ.
2. ຄົ້ນຄວ້າ, ນຳສະເໜີອະນຸມັດສ້າງຕັ້ງ, ໂຈະ, ຍຸບເລີກ, ອອກ ແລະ ຖອນໃບອະນຸຍາດຜູ້ປະກອບການສື່ມວນຊົນ.
3. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ເກັບກຳສະຖິຕິພາຫະນະສື່ມວນຊົນຂອງລັດ, ນິຕິບຸກຄົນ ແລະ ເອກະຊົນ ( ສື່ສິ່ງພິມ, ສື່ເອເລັກໂຕຼນິກ, ສື່ແບບໃໝ່ ).
4. ຄຸ້ມຄອງ, ຕິດຕາມ, ກວດກາເນື້ອໃນທີ່ເຜີຍແຜ່ຜ່ານສື່, ສະມາຄົມນັກຂ່າວ ແລະ ນັກຂ່າວຕ່າງປະເທດ.
5. ຄົ້ນຄວ້າ, ປະກອບຄຳຄິດເຫັນທາງດ້ານວິຊາການ, ນຳສະເໜີນະໂຍບາຍຍ້ອງຍໍ ຫຼື ມາດຕະການຕໍ່ຜູ້ລະເມີດນິຕິກຳດ້ານສື່.
6. ເຜີຍແຜ່ແນວທາງພັກ-ລັດ, ເຫດການພົ້ນເດັ່ນ, ຂໍ້ມູນຂ່າວສານ, ວຽກດີ- ຄົນເດັ່ນ, ສາລະໜ້າຮູ້ ຜ່ານວິທະຍຸ-ໂທລະພາບ, ໂທລະໂຄ່ງ, ສື່ອອນລາຍ.
7. ຄົ້ນຄວ້າ, ປັບປຸງເນື້ອໃນ, ຮູບການ ແລະ ຜະລິດລາຍການວິທະຍຸ-ໂທລະພາບ ແລະ ສື່ອອນລາຍ ໃຫ້ມີເນື້ອໃນອຸດົມສົມບູນ, ວ່ອງໄວ ແລະ ແທດຄົມ.



ສະແກນດ້ວຍ CamScanner

8. ຂຽນຂ່າວ, ຂຽນບົດ, ເຜີຍແຜ່ລາຍການສາລະຄະດີ, ຄັດເລືອກຂ່າວທີ່ເໝາະສົມສົ່ງໃຫ້ສື່ຂັ້ນສູນກາງ.
9. ປະສານສົມທົບກັບພາກສ່ວນຕ່າງໆ ເພື່ອເກັບກຳຂໍ້ມູນຂ່າວ, ຊຸກຍູ້ ອັບໂຫຼດລົງເວັບໄຊທ໌, ເຟສບຸກ ແລະ ເພຈ ພ້ອມທັງປຸກລະດົມໃຫ້ເຂົ້າມາໃຊ້ບໍລິການສື່ຂອງແຂວງ.
10. ຄຸ້ມຄອງ, ນຳໃຊ້, ບຳລຸງຮັກສາອຸປະກອນເຕັກນິກຮັບໃຊ້ວິທະຍຸ-ໂທລະພາບ, ໜັງສືພິມ, ສຳເນົາເກັບຮັກສາຂໍ້ມູນພາບນິ່ງ, ວີດີໂອ ແລະ ສຽງ.
11. ສ້າງແຜນຝຶກອົບຮົມ, ບຳລຸງ, ຍົກລະດັບຄວາມຮູ້ ໃຫ້ແກ່ພະນັກງານ-ລັດຖະກອນທີ່ເຮັດວຽກງານສື່ມວນຊົນ.
12. ຕິດຕາມ, ກວດກາ, ສະຫຼຸບລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

## ໝວດທີ V
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 12: ຫຼັກການ.**

1. ປະຕິບັດແບບແຜນນຳພາ ແລະ ວິທີເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ຮັບປະກັນປະຊາທິປະໄຕໃນການຄົ້ນຄວ້າຕົກລົງຕັດສິນບັນຫາລວມຂອງຄະນະໂຄສະນາອົບຮົມແຂວງ.
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ; ນຳໃຊ້ຄວາມຮູ້, ຄວາມສາມາດຂອງຕົນຢ່າງສູດຊຶດ ເພື່ອເຮັດຫຼ້ອນໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ, ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.
3. ທຸກການເຄື່ອນໄຫວຂອງວຽກງານຂອງຄະນະໂຄສະນາອົບຮົມແຂວງ ແມ່ນອີງໃສ່ແນວທາງ, ກົດລະບຽບຂອງພັກ; ກົດໝາຍ, ລະບຽບການຂອງລັດ ເພື່ອນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 13: ແບບແຜນວິທີເຮັດວຽກ.**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນໆແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານຂອງຄະນະໂຄສະນາອົບຮົມແຂວງ.
2. ເຮັດວຽກຕິດພັນກັບຮາກຖານ, ຕິດພັນຕົວຈິງ ແລະ ຕິດພັນກັບຄະນະພັກ-ຄະນະນຳແຕ່ລະຂັ້ນ ເພື່ອຕິດຕາມ, ກວດກາ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ, ດ້ານອ່ອນໃນການຈັດຕັ້ງປະຕິບັດແຜນການ ໃນແຕ່ລະໄລຍະ, ພ້ອມທັງປະຕິບັດການລາຍງານສ່ອງແສງຢ່າງເປັນປົກກະຕິ.
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດການລາຍງານ ໃຫ້ຄະນະປະຈຳພັກແຂວງ ເປັນປົກກະຕິ;
4. ຄະນະໂຄສະນາອົບຮົມແຂວງ ພົວພັນກັບບັນດາອົງຄະນະພັກ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ຄະນະພັກພະແນກການ,ອົງການ, ກົມກອງ, ຄະນະພັກເມືອງ ດ້ານ



ສະແກນດ້ວຍ CamScanner

ວິຊາການ, ວິຊາສະເພາະ ແລະ ປະຕິບັດລະບອບສ່ອງແສງລາຍງານຢ່າງເປັນປົກກະຕິ ຕາມພາລະບົດ ບາດ ແລະ ຕາມການມອບໝາຍຂອງຄະນະປະຈຳພັກແຂວງ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 14: ງົບປະມານ ແລະ ຕາປະທັບ.**

ຄະນະໂຄສະນາອົບຮົມແຂວງ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ ຕາມລະບຽບ, ກົດໝາຍ ຄືກັບບັນດາພະແນກການ, ອົງການທຽບເທົ່າອື່ນໆ ຢູ່ຂັ້ນແຂວງ.

**ມາດຕາ 15: ການຈັດຕັ້ງປະຕິບັດ.**

ຄະນະບໍລິຫານງານພັກ-ອົງການປົກຄອງແຂວງ, ຄະນະໂຄສະນາອົບຮົມແຂວງ, ບັນດາພະແນກການ ອົງການ, ກົມກອງອ້ອມຂ້າງແຂວງ, ຄະນະບໍລິຫານງານພັກ-ອົງການປົກຄອງເມືອງ, ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 16: ຜົນສັກສິດ.**

ມະຕິຕົກລົງສະບັບນີ້ ປ່ຽນແທນມະຕິຕົກລົງ ສະບັບເລກທີ 059/ຄປພ ຂຈ, ລົງວັນທີ 01 ມີນາ 2023 ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນນີ້ເປັນຕົ້ນໄປ.

**ຕ. ຄະນະປະຈຳພັກແຂວງວຽງຈັນ**

**ເລຂາ**

ພອນແກ້ວ ຊຸນພົນ



ສະແກນດ້ວຍ CamScanner